**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 2530 /ອຄ

ນະຄອນຫຼວງວຽງຈັນ, ວັນທີ 04 ສິງຫາ 2026

# ຂໍ້ຕົກລົງ
# ວ່າດ້ວຍພັນພືດໃໝ່

- ອີງຕາມ ກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ສະບັບເລກທີ 50/ສພຊ, ລົງວັນທີ 20 ພະຈິກ 2023;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 550/ນຍ, ລົງວັນທີ 1 ກັນຍາ 2025;
- ອີງຕາມ ໜັງສືສະເໜີຂອງກົມຊັບສິນທາງປັນຍາ ສະບັບເລກທີ 718/ກຊປ, ລົງວັນທີ 03 ກໍລະກົດ 2026 .

## ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບວຽກງານພັນພືດໃໝ່ ເປັນຕົ້ນ ການຈົດທະບຽນ, ການດຳເນີນການຫຼັງການຈົດທະບຽນ, ການເປັນຜູ້ຕາງໜ້າ, ແລະ ອີງການຄຸ້ມຄອງວຽກງານພັນພືດໃໝ່ ແນໃສ່ເຮັດໃຫ້ການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ ແລະ ເປັນການປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ–ສັງຄົມຂອງຊາດ, ຫັນເປັນອຸດສາຫະກຳ ແລະ ທັນສະໄໝ ຕາມທິດສີຂຽວ ແລະ ຍືນຍົງ.

### ມາດຕາ 2 ພັນພືດໃໝ່

ພັນພືດໃໝ່ ໝາຍເຖິງ ພັນພືດທີ່ຖືກຄົ້ນຄວ້າ ຫຼື ພັດທະນາ ຂຶ້ນມາໃໝ່ ໂດຍນັກປັບປຸງພັນພືດໂດຍການຄັດເລືອກ ແລະ ປັບປຸງພັນໃຫ້ມີຄຸນລັກສະນະຄວາມໃໝ່, ແຕກຕ່າງ, ສະໝ່ຳສະເໝີ ແລະ ຄົງຕົວ.

### ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ຢູ່ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ພັນພືດ** ໝາຍເຖິງ ກຸ່ມຂອງພືດທີ່ມີລັກສະນະທາງພຶກສາສາດຢ່າງດຽວກັນ ແລະ ຍັງບໍ່ທັນຮູ້ຈັກກັນທົ່ວໄປ ໂດຍບໍ່ຄຳນຶງວ່າ ນັກປັບປຸງພັນພືດ ຈະໄດ້ຮັບສິດເຕັມສ່ວນຕາມເງື່ອນໄຂ ຫຼື ບໍ່ກໍ່ຕາມ ຊຶ່ງສາມາດກຳນົດຄຸນລັກສະນະຕ່າງໆ ທີ່ເປັນຜົນມາຈາກປະເພດພັນທຸກຳໃດໜຶ່ງ ຫຼື ຫຼາຍປະເພດພັນທຸກຳຮ່ວມກັນ, ມີຄວາມແຕກຕ່າງ ຢ່າງໜ້ອຍໜຶ່ງຄຸນລັກສະນະໃນພືດຊະນິດດຽວກັນ, ມີຄວາມສະໝ່ຳສະເໝີ ແລະ ຄວາມຄົງຕົວ ໃນເວລາໄປຂະຫຍາຍພັນ;
2. **ຜູ້ຮ້ອງຂໍ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຍື່ນຄຳຮ້ອງຂໍຈົດທະບຽນພັນພືດໃໝ່, ຄັດຄ້ານ, ຮັກສາອາຍຸການ, ປ່ຽນຊື່ ແລະ/ຫຼື ທີ່ຢູ່, ອະນຸຍາດນຳໃຊ້, ໂອນສິດ, ດັດແກ້, ຍົກເລີກ ບາງສ່ວນ ຫຼື ທັງໝົດ, ລຶບລ້າງ ແລະ ການສະເໜີອື່ນໆ ກ່ຽວກັບພັນພືດໃໝ່ ຫຼື ຜູ້ສືບທອດຜົນປະໂຫຍດຂອງບຸກຄົນດັ່ງກ່າວ;

3. **ຄຳຮ້ອງ** ໝາຍເຖິງ ສຳນວນເອກະສານການຍື່ນຄຳຮ້ອງຂໍຈົດທະບຽນພັນພືດໃໝ່, ຄັດຄ້ານ, ຮັກສາອາຍຸການ, ປ່ຽນຊື່ ແລະ/ຫຼື ທີ່ຢູ່, ອະນຸຍາດນຳໃຊ້, ໂອນສິດ, ດັດແກ້, ຍົກເລີກ, ລົບລ້າງ ແລະ ການສະເໜີອື່ນໆ ກ່ຽວກັບພັນພືດໃໝ່;

4. **ຜູ້ຄັດຄ້ານ** ໝາຍເຖິງ ຜູ້ຖືສິດ ຫຼື ເຈົ້າຂອງສິດ ຫຼື ບຸກຄົນທີ່ສາມທີ່ເປັນບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ສະເໜີຄັດຄ້ານຄຳຮ້ອງຂໍຈົດທະບຽນພັນພືດໃໝ່;

5. **ການຄັດຄ້ານ** ໝາຍເຖິງ ການຍື່ນຄຳສະເໜີຂໍຄັດຄ້ານ ໂດຍຜູ້ຄັດຄ້ານ ຕໍ່ຄຳຮ້ອງຂໍຈົດທະບຽນພັນພືດໃໝ່ ທີ່ໄດ້ເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບການຈົດທະບຽນຊັບສິນທາງປັນຍາ;

6. **ຜູ້ຂໍຍົກເລີກ** ໝາຍເຖິງ ຜູ້ຖືສິດ ຫຼື ເຈົ້າຂອງສິດ ຫຼື ບຸກຄົນທີສາມ ທີ່ຍື່ນຄຳຮ້ອງຂໍຍົກເລີກການຈົດທະບຽນພັນພືດໃໝ່;

7. **ນັກປັບປຸງພັນພືດ** ໝາຍເຖິງ ບຸກຄົນທີ່ຄັດເລືອກ ແລະ ປັບປຸງພັນພືດ, ບຸກຄົນທີ່ເປັນຜູ້ວ່າຈ້າງ, ມອບໝາຍໃຫ້ຜູ້ອື່ນປັບປຸງພັນພືດ ຫຼື ບຸກຄົນທີ່ຮ່ວມກັນປັບປຸງພັນພືດ ທີ່ໄດ້ກຳນົດໄວ້ໃນສັນຍາ ລວມທັງຜູ້ສືບທອດສິດຂອງບຸກຄົນດັ່ງກ່າວ;

8. **ການປັບປຸງພັນພືດ** ໝາຍເຖິງ ການຄັດເລືອກສ່ວນຂະຫຍາຍພັນຈາກພືດຕົ້ນໜຶ່ງ ຫຼື ຫຼາຍຕົ້ນທີ່ມີຢູ່ໃນປະຈຸບັນມາປະສົມກັນ ເພື່ອເຮັດໃຫ້ເກີດພັນພືດໃໝ່ຂຶ້ນມາ;

9. **ວັນບູລິມະສິດ** ໝາຍເຖິງ ວັນທີ່ຜູ້ຮ້ອງຂໍໄດ້ຍື່ນຂໍຈົດທະບຽນ ຢູ່ສຳນັກງານອື່ນທີ່ກ່ຽວຂ້ອງກັບຊັບສິນທາງປັນຍາ ຢູ່ຕ່າງປະເທດ ຫຼື ຢູ່ ສປປ ລາວ ຊຶ່ງມີຜົນໃຊ້ໄດ້ກ່ອນໜ້ານີ້;

10. **ຜູ້ຖືສິດ ຫຼື ເຈົ້າຂອງສິດ** ໝາຍເຖິງບຸກຄົນນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີສິດຕໍ່ກົດໝາຍຕໍ່ກັບພັນພືດໃໝ່, ຜູ້ໄດ້ຮັບມອບສິດ ຫຼື ຜູ້ສືບທອດຜົນປະໂຫຍດຈາກບຸກຄົນດັ່ງກ່າວ;

11. **ໃບມອບສິດ** ໝາຍເຖິງເອກະສານທີ່ເປັນລາຍລັກອັກສອນ ຊຶ່ງຜູ້ຖືສິດ ຫຼື ເຈົ້າຂອງສິດ ໄດ້ມອບສິດຂອງຕົນໃຫ້ບຸກຄົນໜຶ່ງ ຫຼື ຫຼາຍຄົນ ປະຕິບັດໜ້າທີ່ແທນຕົນ;

12. **ຜູ້ມອບສິດ** ໝາຍເຖິງ ຜູ້ຖືສິດ ຫຼື ເຈົ້າຂອງສິດພັນພືດໃໝ່ ທີ່ມອບສິດຂອງຕົນໃຫ້ບຸກຄົນໜຶ່ງ ຫຼື ຫຼາຍຄົນປະຕິບັດໜ້າທີ່ແທນຕົນ ໃນການຍື່ນຄຳຮ້ອງຂໍຈົດທະບຽນພັນພືດໃໝ່ ຫຼື ດຳເນີນການອື່ນ ນຳການຊັບສິນທາງປັນຍາ;

13. **ຜູ້ຕາງໜ້າ** ໝາຍເຖິງບຸກຄົນ ຫຼື ທະນາຍຄວາມທີ່ໄດ້ຮັບການມອບສິດຈາກເຈົ້າຂອງພັນພືດໃໝ່ ທີ່ມີຢູ່ ສປປ ລາວ ຫຼື ຕົວແທນທີ່ໄດ້ຮັບອະນຸຍາດຈາກເຈົ້າຂອງພັນພືດໃໝ່ ຈາກຕ່າງປະເທດ ທີ່ບໍ່ມີທີ່ຢູ່ ໃນ ສປປ ລາວ ໃນການຍື່ນຄຳຮ້ອງຂໍຈົດທະບຽນພັນພືດໃໝ່;

14. **ບົດລາຍງານຜົນການທົດລອງປູກພັນພືດໃໝ່** ໝາຍເຖິງເອກະສານຢັ້ງຢືນດ້ານເຕັກນິກ ກ່ຽວກັບຄຸນລັກສະນະສະເພາະຂອງພັນພືດ ທີ່ໄດ້ຜ່ານການທົດລອງປູກ ເພື່ອພິສູດຄວາມແຕກຕ່າງ, ຄວາມສະໝໍ່າສະເໝີ ແລະ ຄວາມຄົງຕົວ.

### ມາດຕາ 4 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນກັບວຽກງານພັນພືດໃໝ່ ຢູ່ ສປປ ລາວ.

## ໝວດທີ 2
## ການຈົດທະບຽນພັນພືດໃໝ່

### ມາດຕາ 5 ເງື່ອນໄຂການຈົດທະບຽນພັນພືດໃໝ່

ພັນພືດທີ່ນຳມາຈົດທະບຽນພັນພືດໃໝ່ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ຄວາມໃໝ່;
2. ຄວາມແຕກຕ່າງ;
3. ຄວາມສະໝໍ່າສະເໝີ;
4. ຄວາມຄົງຕົວ.

ລາຍລະອຽດຂອງຄວາມໃໝ່, ຄວາມແຕກຕ່າງ, ຄວາມສະໝໍ່າສະເໝີ ແລະ ຄວາມຄົງຕົວ ໃຫ້ປະຕິບັດຕາມທີ່ກໍານົດໄວ້ໃນມາດຕາ 70, 71, 72 ແລະ 73 ຂອງກົດໝາຍວ່າດ້ວຍຊັບສິນທາງປັນຍາ.

ນອກຈາກເງື່ອນໄຂທີ່ໄດ້ກໍານົດໄວ້ໃນມາດຕານີ້ ການຈົດທະບຽນພັນພືດໃໝ່ ຕ້ອງໄດ້ພິຈາລະນາການກໍານົດຊື່ຂອງພັນພືດໃໝ່ ໃຫ້ປະຕິບັດຕາມທີ່ກໍານົດໄວ້ໃນມາດຕາ 74 ຂອງກົດໝາຍວ່າດ້ວຍຊັບສິນທາງປັນຍາ ແລະ ມາດຕາ 15 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 6 ການກວດຄົ້ນພັນພືດໃໝ່**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງຂໍກວດຄົ້ນພັນພືດໃໝ່ ໃຫ້ຍື່ນຄໍາຮ້ອງຕໍ່ກົມຊັບສິນທາງປັນຍາ ຫຼື ຜ່ານທາງເອເລັກໂຕຣນິກ ໂດຍຕ້ອງລະບຸຊື່ຂອງພັນພືດ ທີ່ຕ້ອງການກວດຄົ້ນຢ່າງຈະແຈ້ງ ພ້ອມທັງຈ່າຍຄ່າບໍລິການ.

ພາຍຫຼັງໄດ້ຮັບຄໍາຮ້ອງ, ກົມຊັບສິນທາງປັນຍາ ຕ້ອງດໍາເນີນການກວດຄົ້ນພັນພືດໃໝ່ ຢູ່ໃນລະບົບຖານຂໍ້ມູນຊັບສິນທາງປັນຍາ ແລະ ແຈ້ງຜົນການກວດຄົ້ນ ພາຍໃນ ສິບວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບຄໍາຮ້ອງເປັນຕົ້ນໄປ.

ຜົນຂອງການກວດຄົ້ນພັນພືດໃໝ່ ບໍ່ສາມາດນໍາໃຊ້ເພື່ອຢັ້ງຢືນ ຫຼື ເປັນຫຼັກຖານໃນທາງກົດໝາຍ ເປັນພຽງແຕ່ການກວດຄົ້ນຂໍ້ມູນ ກ່ຽວກັບພັນພືດໃໝ່ ເບື້ອງຕົ້ນເທົ່ານັ້ນ.

**ມາດຕາ 7 ການຍື່ນຄໍາຮ້ອງຂໍຈົດທະບຽນພັນພືດໃໝ່**

ຜູ້ຮ້ອງຂໍຈົດທະບຽນພັນພືດໃໝ່ ສາມາດຍື່ນຄໍາຮ້ອງຂໍຈົດທະບຽນພັນພືດໃໝ່ ຢູ່ກົມຊັບສິນທາງປັນຍາ ຫຼື ຜ່ານທາງເອເລັກໂຕຣນິກ ໂດຍປະຕິບັດຕາມທີ່ໄດ້ກໍານົດໄວ້ໃນມາດຕາ 77 ຂອງກົດໝາຍວ່າດ້ວຍຊັບສິນທາງປັນຍາ ແລະ ມາດຕາ 8 ຂອງຂໍ້ຕົກລົງສະບັບນີ້.

ກົມຊັບສິນທາງປັນຍາ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ຮັບຄໍາຮ້ອງ, ໃຫ້ເລກທີ ແລະ ວັນທີຍື່ນຄໍາຮ້ອງ ແລະ ອອກໃບຮັບເງິນ ໂດຍສອດຄ່ອງຕາມເງື່ອນໄຂຕໍ່າສຸດ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 9 ຂອງຂໍ້ຕົກລົງສະບັບນີ້;
2. ກໍລະນີ ຜູ້ຮ້ອງຂໍຈົດທະບຽນພັນພືດໃໝ່ ຫາກມີຈຸດປະສົງ ຂໍຖອນຄໍາຮ້ອງ, ຄໍາຮ້ອງຖືກສະຫຼະສິດ ຫຼື ຖືກປະຕິເສດ ຈະບໍ່ມີການສົ່ງຄືນຄ່າທໍານຽມ ແລະ ຄ່າບໍລິການ ທີ່ໄດ້ຈ່າຍໄປແລ້ວ;
3. ຄໍາຮ້ອງຂໍຈົດທະບຽນພັນພືດໃໝ່ ທີ່ໄດ້ລະບຸວັນບຸລິມະສິດ ໃຫ້ປະຕິບັດຕາມທີ່ກໍານົດໄວ້ໃນມາດຕາ 76 ຂອງກົດໝາຍວ່າດ້ວຍຊັບສິນທາງປັນຍາ. ກໍລະນີ ວັນສຸດທ້າຍຂອງວັນບຸລິມະສິດ ເປັນວັນພັກທາງລັດຖະການ ຫຼື ເປັນວັນທີ່ກົມຊັບສິນທາງປັນຍາ ບໍ່ເປີດຮັບຄໍາຮ້ອງ, ກົມຕ້ອງຕໍ່ໄລຍະເວລາດັ່ງກ່າວອອກໄປຈົນເຖິງວັນລັດຖະການທໍາອິດຖັດໄປ;
4. ກໍລະນີ ສໍານວນຄໍາຮ້ອງບໍ່ຖືກຕ້ອງ ແລະ ບໍ່ຄົບຖ້ວນ ກົມຊັບສິນທາງປັນຍາ ຕ້ອງແຈ້ງເປັນລາຍລັກອັກສອນໃຫ້ຜູ້ຍື່ນຮ້ອງຂໍຈົດທະບຽນພັນພືດໃໝ່ ເພື່ອສະໜອງເອກະສານເພີ່ມເຕີມ ຫຼື ດັດແກ້ໃຫ້ໄດ້ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 8 ຂອງຂໍ້ຕົກລົງສະບັບນີ້ ພາຍໃນ ຫົກສິບວັນ ນັບແຕ່ວັນອອກແຈ້ງການເປັນຕົ້ນໄປ; ຖ້າບໍ່ດັ່ງນັ້ນ ໃຫ້ຖືວ່າສະຫຼະສິດ.

**ມາດຕາ 8 ສໍານວນຄໍາຮ້ອງຂໍຈົດທະບຽນພັນພືດໃໝ່**

ການຂໍຈົດທະບຽນພັນພືດໃໝ່ ຕ້ອງປະກອບມີເອກະສານ ດັ່ງນີ້:

1. ຄໍາຮ້ອງ ຕາມແບບພິມຂອງກົມຊັບສິນທາງປັນຍາ;
2. ຊື່ນັກປັບປຸງພັນພືດ, ຖ້າຜູ້ຮ້ອງຂໍຫາກບໍ່ແມ່ນນັກປັບປຸງພັນພືດໃໝ່ ຕ້ອງມີໜັງສືຢັ້ງຢືນຄວາມເປັນເຈົ້າຂອງ;
3. ໃບມອບສິດ ທີ່ບົ່ງບອກຊື່ ແລະ ທີ່ຢູ່ ຂອງຜູ້ຕາງໜ້າ ຢູ່ ສປປ ລາວ ກໍລະນີຍື່ນຄໍາຮ້ອງຜ່ານຜູ້ຕາງໜ້າ;
4. ໜັງສືສະເໜີການກໍານົດຊື່ຂອງພັນພືດໃໝ່ ຫຼື ຊື່ອ້າງອີງຂອງນັກປັບປຸງພັນພືດ;
5. ບົດອະທິບາຍຄຸນລັກສະນະຂອງພັນພືດໃໝ່;

6. ບົດສັງເຂບຄຸນລັກສະນະຂອງພັນພືດໃໝ່;

7. ໜັງສືຢັ້ງຢືນ ກ່ຽວກັບສ່ວນຂະຫຍາຍພັນພືດ ແລະ ຮູບຕົວຢ່າງສ່ວນຂະຫຍາຍພັນພືດ ຖ້າມີ;

8. ບົດລາຍງານຜົນການປູກທົດລອງພັນພືດໃໝ່ ຢູ່ພາຍໃນ ແລະ ຕ່າງປະເທດ ກ່ຽວກັບຄວາມແຕກຕ່າງ, ຄວາມສະໝໍ່າສະເໝີ ແລະ ຄວາມຄົງຕົວ, ສໍາລັບບົດລາຍງານດັ່ງກ່າວ ກົມຊັບສິນທາງປັນຍາ ສາມາດໃຫ້ຄໍາແນະນໍາ ກ່ຽວກັບສະຖານທີ່ດໍາເນີນການທົດລອງປູກພັນພືດໃໝ່ ທີ່ເໝາະສົມ ຢູ່ ພາຍໃນ ຫຼື ຕ່າງປະເທດ;

9. ໃບຮັບເງິນຄ່າທໍານຽມ ແລະ ຄ່າບໍລິການ.

ສໍານວນຄໍາຮ້ອງຂໍຈົດທະບຽນພັນພືດໃໝ່ ແລະ ເອກະສານຄັດຕິດອື່ນໆ ທີ່ຍື່ນເປັນພາສາອັງກິດ ຜູ້ຮ້ອງຂໍຕ້ອງແປເປັນພາສາລາວ (ຍົກເວັ້ນ ຊື່, ທີ່ຢູ່ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ແລະ ຄໍາສັບທາງດ້ານວິຊາການ) ພາຍໃນ ເກົ້າສິບວັນ ນັບແຕ່ວັນທີ່ໄດ້ຍື່ນຄໍາຮ້ອງເປັນຕົ້ນໄປ ຊຶ່ງການແປ ຕ້ອງໂດຍໄດ້ຮັບການຢັ້ງຢືນຈາກບໍລິສັດແປພາສາ ແລະ ຕ້ອງສະໜອງເອກະສານການແປ ໃຫ້ແກ່ກົມຊັບສິນທາງປັນຍາ ໃນຮູບແບບເອເລັກໂຕຣນິກ ຖ້າຫາກບໍ່ປະຕິບັດຕາມເງື່ອນໄຂດັ່ງກ່າວ ຄໍາຮ້ອງຈະບໍ່ຖືກພິຈາລະນາ ແລະ ຖືວ່າສະຫຼະສິດ.

### ມາດຕາ 9 ເງື່ອນໄຂຕໍ່າສຸດ ໃນການໄດ້ຮັບວັນທີຍື່ນຄໍາຮ້ອງ

ຄໍາຮ້ອງຂໍຈົດທະບຽນພັນພືດໃໝ່ທີ່ມີເງື່ອນໄຂຕໍ່າສຸດ ໃນການຮັບວັນທີ່ຍື່ນຄໍາຮ້ອງ ຢ່າງໜ້ອຍຕ້ອງປະກອບດ້ວຍເອກະສານ ຕາມທີ່ໄດ້ກໍານົດໄວ້ໃນຂໍ້ 1, 5 ແລະ 9 ມາດຕາ 8 ຂອງຂໍ້ຕົກລົງສະບັບນີ້.

ກົມຊັບສິນທາງປັນຍາ ຕ້ອງຮັບຄໍາຮ້ອງຂໍຈົດທະບຽນພັນພືດໃໝ່, ໃຫ້ເລກທີ ແລະ ວັນທີຍື່ນຄໍາຮ້ອງ ແລະ ອອກໃບຮັບເງິນ, ເມື່ອເຫັນວ່າຄໍາຮ້ອງຫາກສອດຄ່ອງຕາມເງື່ອນໄຂຕໍ່າສຸດ ຕາມທີ່ກໍານົດໄວ້ໃນຂໍ້ທີ 1, 5 ແລະ 9 ມາດຕາ 8 ຂອງຂໍ້ຕົກລົງສະບັບນີ້.

ຜູ້ຮ້ອງຂໍຈົດທະບຽນພັນພືດໃໝ່ ຕ້ອງສະໜອງເອກະສານເພີ່ມເຕີມ ຫຼື ດັດແກ້ໃຫ້ໄດ້ຕາມເງື່ອນໄຂຄົບຖ້ວນຕາມທີ່ກໍານົດໄວ້ໃນມາດຕາ 8 ຂອງຂໍ້ຕົກລົງສະບັບນີ້ ພາຍໃນ ຫົກສິບວັນ ນັບແຕ່ວັນອອກແຈ້ງການເປັນຕົ້ນໄປ, ຖ້າກາຍກໍານົດເວລາດັ່ງກ່າວ, ຄໍາຮ້ອງຂໍຈົດທະບຽນພັນພືດໃໝ່ ຖືວ່າສະຫຼະສິດ.

### ມາດຕາ 10 ບົດອະທິບາຍ ກ່ຽວກັບຄຸນລັກສະນະພັນພືດໃໝ່

ບົດອະທິບາຍຄຸນລັກສະນະຂອງພັນພືດໃໝ່ ຕ້ອງມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ຊື່ຂອງພັນພືດໃໝ່;
2. ຄວາມແຕກຕ່າງ;
3. ຄວາມສະໝໍ່າສະເໝີ;
4. ຄວາມຄົງຕົວ;
5. ຂັ້ນຕອນການທົດລອງປູກ;
6. ວິທີການປັບປຸງ ຫຼື ພັດທະນາ ມາເປັນພັນພືດໃໝ່.

### ມາດຕາ 11 ບົດສັງເຂບ

ບົດສັງເຂບຄຸນລັກສະນະຂອງພັນພືດໃໝ່ ຊຶ່ງຕ້ອງປະກອບມີຂໍ້ມູນທີ່ເຮັດໃຫ້ ກົມຊັບສິນທາງປັນຍາ ແລະ ສາທາລະນະຊົນ ສາມາດເຂົ້າໃຈແນວຄວາມຄິດຂອງນັກປັບປຸງພັນ ຈາກການເປີດເຜີຍຂໍ້ມູນທາງເຕັກນິກ ແຕ່ບໍ່ຖືວ່າ ເປັນສ່ວນໜຶ່ງຂອງການເປີດເຜີຍຂໍ້ມູນ ຫຼື ເປັນການກໍານົດຂອບເຂດສິດທີ່ຈະໄດ້ຮັບການປົກປ້ອງ.

## ໝວດທີ 3
## ການພິຈາລະນາຄໍາຮ້ອງຂໍຈົດທະບຽນພັນພືດໃໝ່

### ມາດຕາ 12 ຫຼັກການພິຈາລະນາຄໍາຮ້ອງຂໍຈົດທະບຽນພັນພືດໃໝ່

ກໍລະນີ ການຍື່ນຄໍາຮ້ອງຂໍຈົດທະບຽນພັນພືດໃໝ່ ຫຼາຍສະບັບ ພາຍໃນໄລຍະເວລາດຽວກັນ ທີ່ເປັນຊະນິດດຽວກັນ ຫຼື ຄ້າຍຄືກັນ ໃຫ້ພິຈາລະນາຕາມຫຼັກການຄໍາຮ້ອງ ທີ່ມີວັນບູລິມະສິດມາກ່ອນ.

ຖ້າຫາກກົມຊັບສິນທາງປັນຍາ ໄດ້ດຳເນີນຕາມຂັ້ນຕອນການພິຈາລະນາຄຳຮ້ອງຂໍຈົດທະບຽນພັນພືດໃໝ່ ໃຫ້ຄຳຮ້ອງທີ່ໄດ້ຮັບວັນບູລິມະສິດກ່ອນ, ພ້ອມທັງອອກໜັງສືແຈ້ງປະຕິເສດຄຳຮ້ອງທີ່ໄດ້ຮັບວັນບູລິມະສິດຕາມຫຼັງ. ກໍລະນີການພິຈາລະນາຄຳຮ້ອງທີ່ໄດ້ຮັບວັນບູລິມະສິດຕາມຫຼັງນັ້ນ ຫາກສຳເລັດກ່ອນ ແລະ ຄຳຮ້ອງດັ່ງກ່າວມີເງື່ອນໄຂໃນການໄດ້ຮັບການຈົດທະບຽນພັນພືດໃໝ່, ກົມຊັບສິນທາງປັນຍາ ຕ້ອງໂຈະການພິຈາລະນາຄຳຮ້ອງດັ່ງກ່າວນັ້ນໄວ້ກ່ອນ ຈົນກວ່າການພິຈາລະນາຄຳຮ້ອງທີ່ໄດ້ຮັບວັນບູລິມະສິດກ່ອນໜ້ານັ້ນຈະສິ້ນສຸດລົງ;

ກົມຊັບສິນທາງປັນຍາ ຈະບໍ່ອອກຄຳເຫັນແນະນຳ ກ່ຽວກັບຄວາມເປັນໄປໄດ້ວ່າ ພັນພືດທີ່ຂໍຈົດທະບຽນສອດຄ່ອງກັບເງື່ອນໄຂທີ່ຈະໄດ້ຮັບການຈົດທະບຽນພັນພືດໃໝ່ ແລະ ກົມຊັບສິນທາງປັນຍາ ຕ້ອງບໍ່ໃຫ້ຄຳປຶກສາທາງດ້ານກົດໝາຍແກ່ຜູ້ຮ້ອງຂໍຈົດທະບຽນ ແຕ່ຜູ້ຮ້ອງຂໍຈົດທະບຽນ ສາມາດຍື່ນຄຳຮ້ອງຂໍຄົ້ນຫາຂໍ້ມູນ ກ່ຽວກັບການຈົດທະບຽນພັນພືດໃໝ່ ຢູ່ໃນຖານຂໍ້ມູນຂອງກົມຊັບສິນທາງປັນຍາ ພ້ອມທັງຈ່າຍຄ່າບໍລິການ;

ກໍລະນີ ບໍ່ມີບົດລາຍງານຜົນການທົດລອງປູກພັນພືດໃໝ່ ຜູ້ຍື່ນຄຳຮ້ອງ ສາມາດຂໍຄຳແນະນຳຈາກກົມຊັບສິນທາງປັນຍາ ກ່ຽວກັບສະຖານທີ່ດຳເນີນການທົດລອງປູກພັນພືດໃໝ່ ທີ່ເໝາະສົມ ຢູ່ທັງພາຍໃນ ຫຼື ຕ່າງປະເທດ.

## ມາດຕາ 13 ການກວດສອບເບື້ອງຕົ້ນ

ພາຍຫຼັງໄດ້ຮັບຄຳຮ້ອງຂໍຈົດທະບຽນພັນພືດໃໝ່ແລ້ວ ກົມຊັບສິນທາງປັນຍາ ຕ້ອງດຳເນີນການກວດສອບເບື້ອງຕົ້ນ ກ່ຽວກັບຄວາມຖືກຕ້ອງ ແລະ ຄວາມສອດຄ່ອງຂອງສຳນວນຄຳຮ້ອງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 77 ຂອງກົດໝາຍວ່າດ້ວຍ ຊັບສິນທາງປັນຍາ ແລະ ມາດຕາ 8 ຂອງຂໍ້ຕົກລົງສະບັບນີ້. ການກວດສອບເບື້ອງຕົ້ນຕ້ອງໃຫ້ສຳເລັດພາຍໃນ ສິບວັນລັດຖະການ ນັບແຕ່ວັນຮັບຄຳຮ້ອງຄົບຖ້ວນເປັນຕົ້ນໄປ.

ຖ້າຫາກຄຳຮ້ອງ ບໍ່ຖືກຕ້ອງ ຫຼື ບໍ່ສອດຄ່ອງຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນມາດຕາ 8 ຂອງຂໍ້ຕົກລົງສະບັບນີ້, ກົມຊັບສິນທາງປັນຍາ ຕ້ອງແຈ້ງຜູ້ຮ້ອງຂໍຈົດທະບຽນພັນພືດໃໝ່ ພາຍໃນ ສາມວັນລັດຖະການ ເພື່ອສະໜອງເອກະສານເພີ່ມເຕີມ ຫຼື ດັດແກ້ ໃຫ້ໄດ້ຕາມເງື່ອນໄຂດັ່ງກ່າວ ພາຍໃນ ສິບວັນລັດຖະການ ນັບແຕ່ວັນອອກແຈ້ງການເປັນຕົ້ນໄປ.

ຖ້າຫາກຜູ້ຮ້ອງຂໍຈົດທະບຽນພັນພືດໃໝ່ ຫາກບໍ່ສາມາດປະຕິບັດ ພາຍໃນກຳນົດເວລາ, ກົມຊັບສິນທາງປັນຍາ ຕ້ອງແຈ້ງເປັນລາຍລັກອັກສອນ ໃຫ້ຜູ້ຍື່ນຄຳຮ້ອງຊາບວ່າຄຳຮ້ອງບໍ່ໄດ້ຮັບການພິຈາລະນາ ແລະ ຖືວ່າສະຫຼະສິດ.

## ມາດຕາ 14 ການກຳນົດຊື່ຂອງພັນພືດໃໝ່

ການກຳນົດຊື່ຂອງພັນພືດໃໝ່ ນອກຈາກທີ່ໄດ້ກຳນົດໄວ້ໃນຂໍ້ 2 ມາດຕາ 74 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ໂດຍການກຳນົດຊື່ໃໝ່ຕ້ອງແຕກຕ່າງຈາກຊື່ຂອງພັນພືດ ທີ່ໄດ້ຮັບການປົກປ້ອງ ຢູ່ ສປປ ລາວ ຫຼື ຢູ່ໃນປະເທດທີ່ເປັນພາຄີຂອງສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

ຖ້າຫາກການກຳນົດຊື່ຂອງພັນພືດໃໝ່ ບໍ່ສອດຄ່ອງຕາມທີ່ກຳນົດໄວ້ໃນຂໍ້ 2 ມາດຕາ 74 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ, ກົມຊັບສິນທາງປັນຍາ ຕ້ອງປະຕິເສດຊື່ດັ່ງກ່າວ ແລະ ຕ້ອງແຈ້ງໃຫ້ນັກປັບປຸງພັນ ຫຼື ຜູ້ຮ້ອງຂໍຈົດທະບຽນພັນພືດໃໝ່ ກຳນົດຊື່ພັນພືດຄືນໃໝ່ ພາຍໃນ ສິບຫ້າ ວັນລັດຖະການ ພາຍຫຼັງໄດ້ຮັບແຈ້ງການຈາກກົມ.

ນອກຈາກການກຳນົດຊື່ຂອງພັນພືດໃໝ່ ຍັງຕ້ອງປະຕິບັດຕາມເງື່ອນໄຂ ດັ່ງນີ້:

1. ການກຳນົດຊື່ຂອງພັນພືດໃໝ່ ຕ້ອງສາມາດຈຳແນກພັນພືດໄດ້ ຊຶ່ງອາດບໍ່ປະກອບມີພຽງແຕ່ຕົວເລກ, ຍົກເວັ້ນເຄີຍເປັນການປະຕິບັດຜ່ານມາແລ້ວ;

2. ຕ້ອງບໍ່ແຕະຕ້ອງສິດກ່ອນໜ້າຂອງບຸກຄົນທີສາມ. ຖ້າການກຳນົດຊື່ຂອງພັນພືດໃໝ່ຫາກຊໍ້າກັບຊື່ທີ່ໄດ້ຮັບການປົກປ້ອງແລ້ວ ກົມຊັບສິນທາງປັນຍາ ຕ້ອງສະເໜີໃຫ້ຜູ້ຮ້ອງຂໍຈົດທະບຽນ ກຳນົດຊື່ຄືນໃໝ່;

3. ຕ້ອງສົ່ງຊື່ຂອງພັນພືດໃໝ່ ໃຫ້ສະມາຊິກຂອງອົງການຈັດຕັ້ງສາກົນສຳລັບການປົກປ້ອງພັນພືດໃໝ່ ທີ່ ສປປ ລາວ ເປັນພາຄີ. ກົມຊັບສິນທາງປັນຍາ ຕ້ອງຈົດທະບຽນຊື່ຂອງພັນພືດໃໝ່ຕາມທີ່ໄດ້ສົ່ງໃຫ້ສະມາຊິກຂອງອົງການຈັດຕັ້ງດັ່ງກ່າວ, ຍົກເວັ້ນການກຳນົດຊື່ຂອງພັນພືດໃໝ່ ບໍ່ເໝາະສົມ ກົມຊັບສິນທາງປັນຍາ ຕ້ອງແຈ້ງໃຫ້ນັກປັບປຸງພັນ ພືດ ຫຼື ຜູ້ຮ້ອງຂໍຈົດທະບຽນ ກຳນົດຊື່ຄືນໃໝ່;

4. ພາຍຫຼັງ ກົມຊັບສິນທາງປັນຍາ ໄດ້ຮັບຄໍາຮ້ອງຂໍຈົດທະບຽນພັນພືດໃໝ່, ການຈົດທະບຽນ ແລະ ການຍົກເລີກ ການກໍານົດຊື່ຂອງພັນພືດໃໝ່ ຕ້ອງແຈ້ງໃຫ້ສະມາຊິກຂອງອົງການຈັດຕັ້ງສາກົນສໍາລັບການປົກປ້ອງພັນພືດໃໝ່ ທີ່ ສປປ ລາວ ເປັນພາຄີ ຮັບຊາບ ແລະ ປະກອບຄໍາເຫັນ ກ່ຽວກັບການຂໍກໍານົດຊື່ຂອງພັນພືດໃໝ່.

**ມາດຕາ 15 ການເຜີຍແຜ່ຄໍາຮ້ອງ ແລະ ການສະເໜີຂໍຄັດຄ້ານ**

ພາຍຫຼັງສໍາເລັດການກວດສອບເບື້ອງຕົ້ນ, ກົມຊັບສິນທາງປັນຍາ ຕ້ອງເຜີຍແຜ່ຄໍາຮ້ອງດັ່ງກ່າວລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບຊັບສິນທາງປັນຍາ ພາຍໃນ ສິບຫ້າວັນລັດຖະການ, ການເຜີຍແຜ່ຄໍາຮ້ອງຂໍຈົດທະບຽນພັນພືດໃໝ່ ຕ້ອງປະກອບຂໍ້ມູນ ດັ່ງນີ້:

1. ເລກທີ ຄໍາຮ້ອງ ແລະ ວັນທີ ຍື່ນຄໍາຮ້ອງ;
2. ຊື່ ແລະ ທີ່ຢູ່ ເຈົ້າຂອງພັນພືດ;
3. ຊື່ ແລະ ທີ່ຢູ່ ຂອງນັກປັບປຸງພັນພືດ;
4. ຊື່ ແລະ ທີ່ຢູ່ ຂອງຜູ້ຍື່ນຄໍາຮ້ອງ ຜູ້ຕາງໜ້າ.
5. ບົດສັງເຂບຄຸນລັກສະນະຂອງພັນພືດໃໝ່;
6. ຊື່ພັນພືດໃໝ່.
7. ຊື່ ສາຍພັນ;
8. ວັນບູລິມະສິດ;
9. ຮູບພາບ.

ບຸກຄົນທີສາມ ສາມາດສະເໜີຄັດຄ້ານຄໍາຮ້ອງຂໍຈົດທະບຽນພັນພືດໃໝ່ ຢູ່ກົມຊັບສິນທາງປັນຍາ ຫຼື ຜ່ານທາງເອເລັກໂຕຣນິກ ຕາມທີ່ກໍານົດໄວ້ໃນມາດຕາ 79 ຂອງກົດໝາຍວ່າດ້ວຍຊັບສິນທາງປັນຍາ ພາຍໃນເກົ້າສິບວັນ ນັບແຕ່ວັນທີໄດ້ເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບຊັບສິນທາງປັນຍາ ໂດຍປະກອບຕາມແບບພິມຂອງກົມຊັບສິນທາງປັນຍາ ພ້ອມທັງຈ່າຍຄ່າບໍລິການ.

**ມາດຕາ 16 ການກວດສອບເນື້ອໃນ**

ພາຍຫຼັງກວດສອບເບື້ອງຕົ້ນສໍາເລັດແລ້ວ, ກົມຊັບສິນທາງປັນຍາ ຕ້ອງດໍາເນີນການກວດສອບເນື້ອໃນໂດຍອີງຕາມຄໍາຮ້ອງຂໍຈົດທະບຽນພັນພືດໃໝ່ ນັບແຕ່ວັນຍື່ນຄໍາຮ້ອງເປັນຕົ້ນໄປ.

ກໍລະນີ ໄດ້ຍື່ນຄໍາຮ້ອງ ຫຼື ໄດ້ຈົດທະບຽນພັນພືດໃໝ່ ຢູ່ປະເທດອື່ນ ຫຼື ອົງການຈັດຕັ້ງ ລະຫວ່າງລັດຖະບານ, ຜູ້ຮ້ອງຂໍຈົດທະບຽນພັນພືດໃໝ່ ຕ້ອງສະໜອງບົດລາຍງານການກວດສອບທີ່ໄດ້ຮັບການຮັບຮອງຈາກອົງການປົກປ້ອງພັນພືດໃໝ່ໃນປະເທດນັ້ນ ຫຼື ອົງການຈັດຕັ້ງດັ່ງກ່າວ ໃຫ້ກົມຊັບສິນທາງປັນຍາ .

ກົມຊັບສິນທາງປັນຍາ ຕ້ອງດໍາເນີນການກວດສອບເນື້ອໃນ ໂດຍການພິຈາລະນາບົດລາຍງານຜົນການທົດລອງປູກພັນພືດໃໝ່ ຕາມທີ່ກໍານົດໄວ້ໃນມາດຕາ 80 ຂອງກົດໝາຍວ່າດ້ວຍຊັບສິນທາງປັນຍາ ພິຈາລະນາຄໍາຮ້ອງນັ້ນເພື່ອໃຫ້ສອດຄ່ອງຕາມເງື່ອນໄຂທີ່ກໍານົດໄວ້ໃນມາດຕາ 69, 70, 71, 72, 73 ແລະ 74 ຂອງກົດໝາຍວ່າດ້ວຍຊັບສິນທາງປັນຍາ.

ກົມຊັບສິນທາງປັນຍາ ຈະປະຕິເສດການຈົດທະບຽນພັນພືດໃໝ່ ກໍລະນີ ສໍານວນຄໍາຮ້ອງດັ່ງກ່າວຫາກບໍ່ສອດຄ່ອງຕາມເງື່ອນໄຂການຈົດທະບຽນພັນພືດໃໝ່ ແລະ ຕ້ອງແຈ້ງເຫດຜົນໃນການປະຕິເສດເບື້ອງຕົ້ນໃຫ້ຜູ້ຍື່ນຄໍາຮ້ອງຊາບ.

**ມາດຕາ 17 ການດັດແກ້ຄໍາຮ້ອງ**

ໃນໄລຍະການກວດສອບເນື້ອໃນ ຜູ້ຍື່ນຮ້ອງຂໍຈົດທະບຽນພັນພືດໃໝ່ ສາມາດດັດແກ້ຄໍາຮ້ອງໄດ້, ແຕ່ຕ້ອງດໍາເນີນກ່ອນການຈົດທະບຽນ, ສະຫຼະສິດ, ປະຕິເສດ ຫຼື ການສິ້ນສຸດການພິຈາລະນາຄໍາຮ້ອງນັ້ນ ຕາມທີ່ກໍານົດໄວ້ໃນມາດຕາ 42 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ໂດຍບໍ່ຕ້ອງຈ່າຍຄ່າທໍານຽມ ຫຼື ຄ່າບໍລິການ, ຊຶ່ງການການດັດແກ້ຄໍາຮ້ອງນັ້ນ ຕ້ອງບໍ່ໃຫ້ມີການປ່ຽນແປງຂໍ້ມູນທາງດ້ານເຕັກນິກ ຢູ່ໃນຄໍາຮ້ອງເບື້ອງຕົ້ນ.

**ມາດຕາ 18 ການຈົດທະບຽນພັນພືດໃໝ່**

ກົມຊັບສິນທາງປັນຍາ ຕ້ອງອອກໃບຢັ້ງຢືນການຈົດທະບຽນພັນພືດໃໝ່ ພ້ອມທັງບັນທຶກຂໍ້ມູນທີ່ກ່ຽວຂ້ອງ ລົງໃນປື້ມບັນທຶກການຈົດທະບຽນ ແລະ ລະບົບຖານຂໍ້ມູນຂອງກົມຊັບສິນທາງປັນຍາ ພາຍຫຼັງສອດຄ່ອງຕາມເງື່ອນໄຂໄດ້ຮັບໃບຢັ້ງຢືນການຈົດທະບຽນພັນພືດໃໝ່ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍຊັບສິນທາງປັນຍາ ແລະ ຂໍ້ຕົກລົງສະບັບນີ້.

**ມາດຕາ 19 ການເຜີຍແຜ່ຜົນຂອງການຈົດທະບຽນພັນພືດໃໝ່**

ພາຍຫຼັງການຈົດທະບຽນພັນພືດໃໝ່ ກົມຊັບສິນທາງປັນຍາ ຕ້ອງເຜີຍແຜ່ຜົນຂອງການຈົດທະບຽນພັນພືດໃໝ່ ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບຊັບສິນທາງປັນຍາ.

ຖ້າຫາກວ່າການເຜີຍແຜ່ຫາກມີຂໍ້ຜິດພາດ ເຈົ້າຂອງພັນພືດໃໝ່ ສາມາດສະເໜີຕໍ່ກົມຊັບສິນທາງປັນຍາ ເພື່ອໃຫ້ເຜີຍແຜ່ຜົນການຈົດທະບຽນຄືນໃໝ່ ພ້ອມດ້ວຍຂໍ້ມູນທີ່ຖືກດັດແກ້ ພາຍໃນ ຫົກສິບວັນ ນັບແຕ່ວັນເຜີຍແຜ່ຄັ້ງທຳອິດ ໂດຍບໍ່ຕ້ອງເສຍຄ່າບໍລິການ.

## ໝວດທີ 4
## ການດຳເນີນການຫຼັງການຈົດທະບຽນພັນພືດໃໝ່

**ມາດຕາ 20 ການປ່ຽນແປງຂໍ້ມູນຫຼັງການຈົດທະບຽນພັນພືດໃໝ່**

ເຈົ້າຂອງພັນພືດໃໝ່ ສາມາດຍື່ນຄຳຮ້ອງຢູ່ນຳກົມຊັບສິນທາງປັນຍາ ຫຼື ຜ່ານທາງເອເລັກໂຕຣນິກ ເພື່ອປ່ຽນແປງຂໍ້ມູນກ່ຽວກັບ ຊື່ ແລະ/ຫຼື ທີ່ຢູ່ ຂອງເຈົ້າຂອງພັນພືດໃໝ່ ຫຼື ຜູ້ຕາງໜ້າ ຕາມແບບພິມ ຂອງກົມຊັບສິນທາງປັນຍາ ພ້ອມທັງຈ່າຍຄ່າບໍລິການ.

ກົມຊັບສິນທາງປັນຍາ ພິຈາລະນາປ່ຽນແປງຂໍ້ມູນ ແລະ ຕ້ອງບັນທຶກທຸກການປ່ຽນແປງລົງໃນຖານຂໍ້ມູນ, ປື້ມບັນທຶກການຈົດທະບຽນຂອງກົມຊັບສິນທາງປັນຍາ ແລະ ເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບຊັບສິນທາງປັນຍາ.

**ມາດຕາ 21 ການຂໍສຳເນົາໃບຢັ້ງຢືນການຈົດທະບຽນພັນພືດໃໝ່**

ເຈົ້າຂອງພັນພືດໃໝ່ ສາມາດຂໍສຳເນົາໃບຢັ້ງຢືນການຈົດທະບຽນພັນພືດໃໝ່ ເພື່ອນຳໃຊ້ເປັນຫຼັກຖານໃນການດຳເນີນຄະດີຢູ່ສານປະຊາຊົນ, ການຈົດທະບຽນພັນພືດໃໝ່ ຢູ່ຕ່າງປະເທດ ແລະ ໃຊ້ແທນໃບຢັ້ງຢືນການຈົດທະບຽນ ຫຼື ການຕໍ່ອາຍຸທີ່ເສຍຫາຍ ຫຼື ຊອກບໍ່ເຫັນ ຊຶ່ງເຈົ້າຂອງພັນພືດໃໝ່ທີ່ໄດ້ຮັບການຈົດທະບຽນ ຢູ່ກົມຊັບສິນທາງປັນຍາ ເພື່ອຂໍສຳເນົາໃບຢັ້ງຢືນການຈົດທະບຽນພັນພືດໃໝ່ ຕ້ອງຍື່ນຄຳຮ້ອງ ຢູ່ກົມຊັບສິນທາງປັນຍາ ຫຼື ຜ່ານທາງເອເລັກໂຕຣນິກ ພ້ອມທັງຈ່າຍຄ່າບໍລິການ.

**ມາດຕາ 22 ການດັດແກ້ພາຍຫຼັງການຈົດທະບຽນພັນພືດໃໝ່**

ພາຍຫຼັງພັນພືດໃໝ່ ໄດ້ຮັບການຈົດທະບຽນແລ້ວ, ເຈົ້າຂອງພັນພືດໃໝ່ ສາມາດຍື່ນຄຳຮ້ອງຂໍດັດແກ້ຂໍ້ມູນບາງສ່ວນ ຢູ່ໃນບົດອະທິບາຍ ຄຸນລັກສະນະພັນພືດໃໝ່ ຫຼື ດັດແກ້ບາງຂໍ້ຜິດພາດໃນຄຳຮ້ອງຂໍຈົດທະບຽນ ໂດຍຍື່ນຄຳຮ້ອງຕາມແບບພິມຂອງກົມຊັບສິນທາງປັນຍາ ພ້ອມທັງຈ່າຍຄ່າບໍລິການ. ຊຶ່ງການດັດແກ້ດັ່ງກ່າວ ກົມຊັບສິນທາງປັນຍາ ອະນຸຍາດໃຫ້ດັດແກ້ໄດ້ພຽງສ່ວນໜ້ອຍ. ກົມຊັບສິນທາງປັນຍາ ຕ້ອງເຜີຍແຜ່ຂໍ້ມູນ ກ່ຽວກັບການດັດແກ້ດັ່ງກ່າວ ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບຊັບສິນທາງປັນຍາ.

**ມາດຕາ 23 ການຍົກເລີກການຈົດທະບຽນພັນພືດໃໝ່**

ກໍລະນີກົມຊັບສິນທາງປັນຍາ ເຫັນວ່າພັນພືດໃໝ່ທີ່ໄດ້ອອກໃບຢັ້ງຢືນການຈົດທະບຽນພັນພືດໃໝ່ ເປັນຂໍ້ມູນທີ່ບໍ່ຖືກຕ້ອງ, ຂໍ້ມູນບິດເບືອນ ຫຼື ແອບອ້າງ ຄວາມເປັນເຈົ້າຂອງແທ້ຈິງ ຢູ່ໃນສຳນວນຄຳຮ້ອງ, ປົດບັງຂໍ້ມູນ ຫຼື ມີການກະທຳໃດໜຶ່ງທີ່ລະເມີດ ຫຼື ບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ, ຊຶ່ງຖ້າຂໍ້ມູນດັ່ງກ່າວມີມູນຄວາມຈິງ ກົມຊັບສິນທາງປັນຍາ ຕ້ອງດຳເນີນຂັ້ນຕອນການຍົກເລີກການຈົດທະບຽນພັນພືດໃໝ່ ແລະ ຕ້ອງແຈ້ງໃຫ້ເຈົ້າຂອງພັນພືດໃໝ່ຮັບຊາບ.

ຖ້າຫາກວ່າເຈົ້າຂອງພັນພືດໃໝ່ ບໍ່ເຫັນດີຕໍ່ການຍົກເລີກການຈົດທະບຽນພັນພືດໃໝ່, ສາມາດສະເໜີຂໍພິຈາລະນາທາງດ້ານບໍລິຫານ ຢູ່ກົມຊັບສິນທາງປັນຍາ ຫຼື ສານປະຊາຊົນ.

**ມາດຕາ 24 ການໂອນສິດ ແລະ ການບັນທຶກຂໍ້ມູນການໂອນສິດ**

ເຈົ້າຂອງພັນພືດໃໝ່ ສາມາດໂອນສິດຂອງຕົນ ບາງສ່ວນ ຫຼື ທັງໝົດ ໂດຍເຮັດເປັນລາຍລັກອັກສອນ ເຊັ່ນ: ການເຮັດສັນຍາ, ການສືບທອດມູນມໍລະດົກ ຫຼື ການໃຫ້ເປັນຂອງຂວັນ.

ກໍລະນີ ມີການໂອນສິດຕໍ່ພັນພືດໃໝ່ ທີ່ໄດ້ຮັບການຈົດທະບຽນ, ຜູ້ໂອນສິດ ຫຼື ຜູ້ຮັບໂອນສິດ ຕ້ອງແຈ້ງກ່ຽວກັບການໂອນສິດດັ່ງກ່າວ ໃຫ້ກົມຊັບສິນທາງປັນຍາ ຕາມແບບພິມຂອງກົມ ພ້ອມທັງຈ່າຍຄ່າບໍລິການ.

ກົມຊັບສິນທາງປັນຍາ ຕ້ອງແຈ້ງຮັບຮູ້ ກ່ຽວກັບການໂອນສິດດັ່ງກ່າວ ເປັນລາຍລັກອັກສອນ ໃຫ້ແກ່ຜູ້ຮັບໂອນສິດ, ບັນທຶກການໂອນສິດເຂົ້າໃນລະບົບຖານຂໍ້ມູນທາງຊັບສິນທາງປັນຍາ ແລະ ເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບຊັບສິນທາງປັນຍາ. ຖ້າຜູ້ທີ່ໄດ້ຮັບໂອນສິດຫາກເປັນຜູ້ແຈ້ງການໂອນສິດ, ຜູ້ກ່ຽວຕ້ອງສົ່ງສຳເນົາແຈ້ງຮັບຮູ້ກ່ຽວກັບການໂອນສິດດັ່ງກ່າວ ໃຫ້ຜູ້ໂອນສິດ.

ກໍລະນີ ມີການໂອນກຳມະສິດຂອງນິຕິບຸກຄົນທີ່ກ່ຽວຂ້ອງກັບພັນພືດໃໝ່ ຕ້ອງປະຕິບັດຕາມທີ່ກຳນົດໄວ້ໃນເອກະສານການໂອນສິດ. ກໍລະນີ ບໍ່ໄດ້ກຳນົດໄວ້ເປັນຢ່າງອື່ນ, ການໂອນກຳມະສິດຂອງນິຕິບຸກຄົນ ໃຫ້ຖືວ່າເປັນການໂອນທັງໝົດຕໍ່ພັນພືດໃໝ່ ຂອງນິຕິບຸກຄົນດັ່ງກ່າວ.

ຫາກຕ້ອງການຄວາມກະຈ່າງແຈ້ງ ຫຼື ມີຄວາມສົງໃສ ກົມຊັບສິນທາງປັນຍາ ສາມາດແຈ້ງ ເພື່ອໃຫ້ບຸກຄົນທີ່ແຈ້ງການໂອນສິດນັ້ນສະໜອງຂໍ້ມູນ ຫຼື ເອກະສານເພີ່ມຕື່ມ.

ຖ້າຫາກມີການໂອນສິດນຳໃຊ້ພັນພືດໃໝ່ ເຈົ້າຂອງສິດຕ້ອງໄດ້ແຈ້ງ ໃຫ້ກົມຊັບສິນທາງປັນຍາ ບັນທຶກໄວ້ໃນຖານຂໍ້ມູນຊັບສິນທາງປັນຍາ, ຖ້າບໍ່ດັ່ງນັ້ນ, ຈະບໍ່ມີຜົນສັກສິດຕໍ່ຄູ່ກໍລະນີ.

**ມາດຕາ 25 ອາຍຸການປົກປ້ອງ**

ອາຍຸການປົກປ້ອງພັນພືດໃໝ່ ພືດຢືນຕົ້ນ ແລະ ຕົ້ນໝາກອະງຸ່ນ ມີອາຍຸການປົກປ້ອງ ຊາວຫ້າປີ ນັບແຕ່ວັນທີຈົດທະບຽນເປັນຕົ້ນໄປ. ສຳລັບພັນພືດທົ່ວໄປ ມີອາຍຸການປົກປ້ອງ ຊາວປີ ນັບແຕ່ວັນທີຈົດທະບຽນເປັນຕົ້ນໄປ.

**ມາດຕາ 26 ຮັກສາອາຍຸການປົກປ້ອງ**

ການຮັກສາອາຍຸການປົກປ້ອງພັນພືດໃໝ່ ສຳລັບປີທີ 5 ແລະ ປີຖັດໄປເຈົ້າຂອງພັນພືດໃໝ່ ຕ້ອງຈ່າຍຄ່າທຳນຽມ ແລະ ບໍລິການລ່ວງໜ້າ ເປັນແຕ່ລະປີ ກ່ອນວັນໝົດອາຍຸການປົກປ້ອງຂອງແຕ່ລະປີ.

ກໍລະນີ ທີ່ມື້ສຸດທ້າຍຂອງການຮັກສາອາຍຸການປົກປ້ອງພັນພືດໃໝ່ ຫາກເປັນວັນພັກລັດຖະການ ຫຼື ເປັນວັນທີ່ກົມຊັບສິນທາງປັນຍາ ບໍ່ຮັບຄຳຮ້ອງ ກົມຕ້ອງຕໍ່ໄລຍະເວລາດັ່ງກ່າວອອກໄປ ຈົນເຖິງວັນລັດຖະການທຳອິດຖັດໄປ.

ກໍລະນີເຈົ້າຂອງພັນພືດບໍ່ຈ່າຍຄ່າທຳນຽມ ແລະ ຄ່າບໍລິການ ພາຍໃນ ຫົກເດືອນ ກ່ອນວັນສິ້ນສຸດການຮັກສາອາຍຸການປົກປ້ອງຂອງແຕ່ລະປີ ກົມຊັບສິນທາງປັນຍາ ສາມາດເລື່ອນເວລາໃນການຈ່າຍອອກໄປອີກ ຫົກເດືອນ ແຕ່ຕ້ອງໄດ້ຈ່າຍຄ່າປັບໃໝໃນຄວາມລ້າຊ້າ.

**ມາດຕາ 27 ການອະນຸຍາດນຳໃຊ້ສິດຕໍ່ພັນພືດໃໝ່**

ເຈົ້າຂອງພັນພືດໃໝ່ ສາມາດອະນຸຍາດໃຫ້ບຸກຄົນອື່ນນຳໃຊ້ສິດຕໍ່ພັນພືດໃໝ່ຂອງຕົນ ບາງສ່ວນ ຫຼື ທັງໝົດ ເພື່ອສະແຫວງຫາຜົນປະໂຫຍດຈາກສິດດັ່ງກ່າວ ຊຶ່ງສາມາດດຳເນີນໂດຍການເຮັດສັນຍາການອະນຸຍາດນຳໃຊ້ ແຕ່ບໍ່ຖືເປັນການໂອນກຳມະສິດຕໍ່ພັນພືດໃໝ່ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 82 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ. ຜູ້ອະນຸຍາດນຳໃຊ້ ຕ້ອງແຈ້ງໃຫ້ກົມຊັບສິນທາງປັນຍາຊາບ ພ້ອມທັງຈ່າຍຄ່າບໍລິການ ຕາມຂັ້ນຕອນ.

ກົມຊັບສິນທາງປັນຍາ ຕ້ອງບັນທຶກ ແລະ ອອກໜັງສື ກ່ຽວກັບການອະນຸຍາດນຳໃຊ້ພັນພືດໃໝ່ ໃຫ້ແກ່ຜູ້ໄດ້ຮັບສິດນຳໃຊ້.

ກໍລະນີ ສິດຕໍ່ພັນພືດໃໝ່ ທີ່ມີຫຼາຍຄົນຖືສິດຮ່ວມກັນ, ການອະນຸຍາດນຳໃຊ້ຕ້ອງໄດ້ຮັບການຕົກລົງຈາກເຈົ້າຂອງສິດທຸກຄົນ.

**ມາດຕາ 28 ການສ້າງສຳນວນເອກະສານຂຶ້ນໃໝ່**

ຖ້າຫາກສຳນວນເອກະສານເສຍຫາຍ ຫຼື ສູນເສຍ ກົມຊັບສິນທາງປັນຍາ ຕ້ອງແຈ້ງໃຫ້ຜູ້ຍື່ນຄຳຮ້ອງ ຫຼື ເຈົ້າຂອງສຳນວນເອກະສານ ສົ່ງສຳເນົາເອກະສານທີ່ກ່ຽວຂ້ອງ ຫຼື ເອກະສານທີ່ໄດ້ຕິດຕໍ່ພົວພັນກັບກົມຊັບສິນທາງປັນຍາ ພ້ອມທັງຢັ້ງຢືນຄວາມຖືກຕ້ອງ ແລະ ຄົບຖ້ວນ. ພາຍຫຼັງໄດ້ຮັບເອກະສານທີ່ກ່ຽວຂ້ອງ ກົມຊັບສິນທາງປັນຍາ ຕ້ອງສ້າງສຳເນົາສຳນວນເອກະສານນັ້ນຂຶ້ນມາໃໝ່.

## ໝວດທີ 5
## ການເປັນຜູ້ຕາງໜ້າໃນການຈົດທະບຽນພັນພືດໃໝ່ ແລະ ດຳເນີນການອື່ນ

**ມາດຕາ 29 ການເປັນຜູ້ຕາງໜ້າໃນການຈົດທະບຽນພັນພືດໃໝ່ ແລະ ດຳເນີນການອື່ນ**

ບຸກຄົນທີ່ມີສິດຕາງໜ້າ ໃນການດຳເນີນການຈົດທະບຽນພັນພືດໃໝ່ ແລະ ດຳເນີນການອື່ນ ມີດັ່ງນີ້:

1. ບຸກຄົນໃດໜຶ່ງທີ່ ຖືກແຕ່ງຕັ້ງໃຫ້ເປັນຜູ້ຕາງໜ້າ ຈາກເຈົ້າຂອງພັນພືດໃໝ່;
2. ທະນາຍຄວາມ ທີ່ໄດ້ຮັບອະນຸຍາດໃຫ້ດຳເນີນການທາງດ້ານກົດໝາຍ ຢູ່ໃນ ສປປ ລາວ;
3. ບໍລິສັດຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ;
4. ພະນັກງານຂອງນິຕິບຸກຄົນ ຫຼື ການຈັດຕັ້ງ;
5. ພົນລະເມືອງລາວທີ່ຜູ້ຮ້ອງຂໍຈົດທະບຽນວ່າຈ້າງ.

ສຳລັບ ຜູ້ຮ້ອງຂໍຈົດທະບຽນພັນພືດໃໝ່ ທີ່ເປັນຄົນຕ່າງປະເທດ ຕ້ອງຍື່ນຄຳຮ້ອງຂໍຈົດທະບຽນພັນພືດໃໝ່ ຜ່ານບໍລິສັດຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ.

ຜູ້ຕາງໜ້າ ຕ້ອງເປັນບຸກຄົນທີ່ໄດ້ຮັບການແຕ່ງຕັ້ງຕາມໃບມອບສິດ ທີ່ເຮັດເປັນລາຍລັກອັກສອນ ແລະ ມີລາຍເຊັນຂອງຜູ້ຮ້ອງຂໍຈົດທະບຽນພັນພືດໃໝ່ ຫຼື ຜູ້ມອບສິດ.

ກົມຊັບສິນທາງປັນຍາ ຈະຮັບຮູ້ເງື່ອນໄຂທີ່ໄດ້ກຳນົດໄວ້ໃນໃບມອບສິດ, ເວັ້ນເສຍແຕ່ເງື່ອນໄຂຂອງໃບມອບສິດ ບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ.

**ມາດຕາ 30 ການມອບສິດໃຫ້ເປັນຜູ້ຕາງໜ້າ**

ຜູ້ຕາງໜ້າ ຕ້ອງແມ່ນບຸກຄົນທີ່ໄດ້ຮັບການແຕ່ງຕັ້ງຕາມໃບມອບສິດ ທີ່ມີລາຍເຊັນຂອງຜູ້ຮ້ອງຂໍຈົດທະບຽນ ຫຼື ຜູ້ມອບສິດ.

ກໍລະນີ ທີ່ຄຳຮ້ອງຂໍຈົດທະບຽນພັນພືດໃໝ່ຫາກຍື່ນຮ່ວມກັນຫຼາຍຄົນ, ໃບມອບສິດ ຕ້ອງມີລາຍເຊັນຂອງໝົດທຸກຄົນ, ເວັ້ນເສຍແຕ່ມີບຸກຄົນໃດໜຶ່ງຫາກເສຍຊີວິດ.

ຕາມມາດຕາ 30 ຂອງຂໍ້ຕົກລົງສະບັບນີ້ ແລະ ບົດບັນຍັດອື່ນໃນໝວດນີ້, ຜູ້ຮ້ອງຂໍສາມາດແຕ່ງຕັ້ງຜູ້ຕາງໜ້າໄດ້ຫຼາຍຄົນ ຊຶ່ງທີ່ມີທີ່ຢູ່ບ່ອນດຽວກັນ.

**ມາດຕາ 31 ການມອບສິດ**

ການມອບສິດ ແມ່ນໃບມອບສິດທີ່ເຈົ້າຂອງສິດໄດ້ມອບໝາຍໃຫ້ບຸກຄົນໜຶ່ງ ຫຼື ຫຼາຍບຸກຄົນ ປະຕິບັດໜ້າທີ່ແທນຕົນ.

ການມອບສິດໃຫ້ເປັນຜູ້ຕາງໜ້າ ຕ້ອງກຳນົດ ດັ່ງນີ້:

1. ເງື່ອນໄຂ ແລະ ຂອບເຂດ ຂອງການເປັນຜູ້ຕາງໜ້າ;
2. ສິດທີ່ຖືກມອບໝາຍ ໃນການດຳເນີນການໃດໜຶ່ງທີ່ກ່ຽວຂ້ອງຢູ່ນຳ ກົມຊັບສິນທາງປັນຍາ;
3. ໄລຍະເວລາ ຖ້າມີ.

ຜູ້ມອບສິດສາມາດຍົກເລີກໄດ້ທຸກເວລາ ໂດຍບໍ່ສົ່ງຜົນກະທົບຕໍ່ສິດ ຂອງຜູ້ຕາງໜ້າໃນການໄດ້ຮັບຄ່າຕອບແທນຈາກການບໍລິການ ແລະ ຄ່າໃຊ້ຈ່າຍຕ່າງໆທີ່ເກີດຂຶ້ນ ໃນລະຫວ່າງການພົວພັນກັບກົມຊັບສິນທາງປັນຍາ.

ກົມຊັບສິນທາງປັນຍາ ຮັບຮູ້ເງື່ອນໄຂທີ່ໄດ້ກໍານົດໄວ້ໃນໃບມອບສິດ, ເວັ້ນເສຍແຕ່ເງື່ອນໄຂຂອງໃບມອບສິດ ຫາກບໍ່ສອດຄ່ອງກັບກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ຫຼື ຂໍ້ຕົກລົງສະບັບນີ້.

ກົມຊັບສິນທາງປັນຍາ ຕ້ອງຖືວ່າໃບມອບສິດ ນໍາໃຊ້ສະເພາະຄໍາຮ້ອງດຽວເທົ່ານັ້ນ ຖ້າໃບມອບສິດຫາກບໍ່ໄດ້ກໍານົດ ຂອບເຂດ ຫຼື ໄລຍະເວລາ ຂອງການເປັນຜູ້ຕາງໜ້າ ຫຼື ການດໍາເນີນການອື່ນ ທີ່ກ່ຽວຂ້ອງກັບການມອບສິດດັ່ງກ່າວ ແລະ ອາຍຸຂອງໃບມອບສິດຈະຖືວ່າສິ້ນສຸດລົງ ໃນເມື່ອທຸກບັນຫາທີ່ກ່ຽວຂ້ອງກັບຄໍາຮ້ອງດັ່ງກ່າວ ຫຼື ການດໍາເນີນການອື່ນ ຫາກສໍາເລັດແລ້ວ;

ການມອບສິດທີ່ມີຜົນບັງຄັບໃຊ້ຕ້ອງເຮັດເປັນລາຍລັກອັກສອນ ແລະ ມີລາຍເຊັນຜູ້ມອບສິດ. ກໍລະນີ ຜູ້ອອກໃບມອບສິດເປັນນິຕິບຸກຄົນ ຫຼື ການຈັດຕັ້ງ ໃບມອບສິດຕ້ອງໄດ້ລົງລາຍເຊັນ ໂດຍຜູ້ມີສິດອໍານາດຂອງນິຕິບຸກຄົນ ຫຼື ການຈັດຕັ້ງ.

**ມາດຕາ 32 ການສິ້ນສຸດການເປັນຜູ້ຕາງໜ້າ**

ການເປັນຜູ້ຕາງໜ້າ ຈະສິ້ນສຸດລົງ ໃນກໍລະນີການມອບສິດຖືກຍົກເລີກໂດຍຜູ້ມອບສິດ ຫຼື ຜູ້ຕາງໜ້າຖອນຕົວ. ກໍລະນີ ຜູ້ຕາງໜ້າໄດ້ຖອນຕົວ ຕ້ອງແຈ້ງໃຫ້ກົມຊັບສິນທາງປັນຍາ ແລະ ຜູ້ມອບອໍານາດຮັບຊາບ.

## ໝວດທີ 6
## ການຈັດຕັ້ງປະຕິບັດຄຸ້ມຄອງວຽກງານພັນພືດໃໝ່

**ມາດຕາ 33 ການຈັດຕັ້ງປະຕິບັດຄຸ້ມຄອງວຽກງານພັນພືດໃໝ່**

ການຈັດຕັ້ງປະຕິບັດຄຸ້ມຄອງວຽກງານພັນພືດໃໝ່ ຂອງຂະແໜງອຸດສາຫະກໍາ ແລະ ການຄ້າ ແບ່ງອອກເປັນ ສອງ ຂັ້ນ ດັ່ງນີ້:

1. ຂັ້ນສູນກາງ ແມ່ນກົມຊັບສິນທາງປັນຍາ;
2. ຂັ້ນທ້ອງຖິ່ນ ແມ່ນພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ.

**ມາດຕາ 34 ສິດ ແລະ ໜ້າທີ່ ຂອງກົມຊັບສິນທາງປັນຍາ**

ກົມຊັບສິນທາງປັນຍາ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ແລະ ປັບປຸງນິຕິກໍາ ກ່ຽວກັບການຄຸ້ມຄອງວຽກງານພັນພືດໃໝ່ ເພື່ອນໍາສະເໜີຂັ້ນເທິງພິຈາລະນາ;
2. ເຜີຍແຜ່, ແນະນໍາຂໍ້ຕົກລົງສະບັບນີ້ ແລະ ນິຕິກໍາທີ່ກ່ຽວຂ້ອງກັບວຽກງານພັນພືດໃໝ່;
3. ພິຈາລະນາສໍານວນຄໍາຮ້ອງຂໍຈົດທະບຽນ, ການຮັກສາອາຍຸການປົກປ້ອງ, ປ່ຽນຊື່ ແລະ/ຫຼື ທີ່ຢູ່, ອະນຸຍາດນໍາໃຊ້, ໂອນສິດ ແລະ ການສະເໜີອື່ນ ກ່ຽວກັບວຽກງານພັນພືດໃໝ່;
4. ອອກໃບຢັ້ງຢືນຈົດທະບຽນ, ແຈ້ງປະຕິເສດ, ລຶບລ້າງ ແລະ ອື່ນໆ ກ່ຽວກັບການຈົດທະບຽນພັນພືດໃໝ່;
5. ບັນທຶກ ແລະ ເກັບຮັກສາຂໍ້ມູນ ກ່ຽວກັບວຽກງານພັນພືດໃໝ່;
6. ບໍລິການກວດຄົ້ນພັນພືດໃໝ່ ໃນຖານຂໍ້ມູນຊັບສິນທາງປັນຍາ ຂອງກົມຊັບສິນທາງປັນຍາ;
7. ຄົ້ນຄວ້າ ແລະ ພິຈາລະນາ ຄໍາຊີ້ແຈງຕໍ່ການແຈ້ງປະຕິເສດ ກ່ຽວກັບການຈົດທະບຽນພັນພືດໃໝ່;
8. ເກັບຄ່າທໍານຽມ ແລະ ບໍລິການໃນການຄຸ້ມຄອງວຽກງານພັນພືດໃໝ່;
9. ອໍານວຍຄວາມສະດວກ, ຊຸກຍູ້ ແລະ ສົ່ງເສີມວຽກງານພັນພືດໃໝ່;
10. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ກ່ຽວກັບວຽກງານຄຸ້ມຄອງພັນພືດໃໝ່
11. ຮັບ ແລະ ພິຈາລະນາແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ກ່ຽວກັບການຈົດທະບຽນພັນພືດໃໝ່;
12. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານພັນພືດໃໝ່ ໃຫ້ຂັ້ນເທິງຊາບຢ່າງເປັນປົກກະຕິ;
13. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 35 ສິດ ແລະ ໜ້າທີ່ ຂອງພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ**

ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່, ແນະນໍາ ການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ແລະ ນິຕິກໍາ ກ່ຽວກັບວຽກງານພັນພືດໃໝ່;
2. ອໍານວຍຄວາມສະດວກ, ຕິດຕາມ, ຊຸກຍູ້ ແລະ ສົ່ງເສີມ ວຽກງານພັນພືດໃໝ່;
3. ມອບໝາຍຄວາມຮັບຜິດຊອບ ໃຫ້ຫ້ອງການອຸດສາຫະກໍາ ແລະ ການຄ້າ ເມືອງ, ນະຄອນ ຕາມຄວາມເໝາະສົມ;
4. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ກ່ຽວກັບວຽກງານຄຸ້ມຄອງພັນພືດໃໝ່
5. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານພັນພືດໃໝ່ ໃຫ້ກົມຊັບສິນທາງປັນຍາ ຢ່າງເປັນປົກກະຕິ;
6. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 36 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມຊັບສິນທາງປັນຍາ ເປັນເຈົ້າການປະສານສົມທົບກັບພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກໍາ ແລະ ການຄ້າ ເມືອງ, ນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຜີຍແຜ່ ແນະນໍາ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 37 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫຼັງລົງລາຍເຊັນ ສີ່ສິບຫ້າ ວັນ ແລະ ໄດ້ລົງໃນຈົດໝາຍເຫດທາງລັດຖະການ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ຕົກລົງ ວ່າດ້ວຍພັນພືດໃໝ່ ສະບັບເລກທີ 0436/ອຄ, ລົງວັນທີ 30 ມີນາ 2023.

**ລັດຖະມົນຕີ**

ກະຊວງອຸດສາຫະກໍາ ແລະ ການຄ້າ
ລັດຖະມົນຕີ

ມະໄລທອງ ກົມມະສິດ